# ຄຳແນະນຳກ່ຽວກັບDNA ຂອງການຮັບໃຊ້ຂອງທີນຊາເລັນ

ໂດຍ ເດບ ແບັດຕີ

## A. ແມ່ນຫຍັງທີ່ນຳຄວາມສຳເລັດແທ້ຈິງໃນການຮັບໃຊ້ ທີນຊາເລັນ

1. DNA ແມ່ນລັກສະນະສ່ວນຕົວຂອງພວກເຮົາ
2. DNA ແມ່ນຜູ້ທີ່ເຮົາເປັນທີ່ສ່ວນເລິກຂອງຫົວໃຈ, ຈິດໃຈແລະວິນຍານ
3. DNA ແມ່ນສິ່ງທີ່ນຳ_______________ມາສູ່ວຽກງານການຮັບໃຊ້ຂອງເຮົາ

## B. ແມ່ນຫຍັງແມ່ນພື້ນຖານ DNA ຂອງທີນຊາເລັນ? ແມ່ນຫຍັງເປັນສ່ວນປະກອບທີ່ສຳຄັນທີ່ນຳ (ຊີວິດຈິງ) ເຂົ້າມາໃນວຽກງານການຮັບໃຊ້ ? ພຣະເຈົ້າຕ້ອງການDNA ແບບໃດໃນການານຮັບໃຊ້ນີ້?

1. ______________________________

ເພັງສັນລະເສີນ 126:5-6
ເຮັບເລີ 11:6 , ເຮັບເລີ 4:15-16
ມັດທາຍ 21:22

"ພວກເຮົາໄດ້ອະທິຖານຫຼາຍ--- ບໍ່ແມ່ນເພາະວ່າພວກເຮົາແຂງແຮງຝາຍວິນຍານ-- ພວກເຮົາໄດ້ອະທິຖານເພື່ອຢູ່ລອດ! ແລະພວກເຮົາໄດ້ເຫັນພຣະເຈົ້າໄດ້ເຮັດສິ່ງທີ່ອັດສະຈັນ" -- ທ່ານ ດອນ ອາກົວ ອຳນວຍການ ຂອງ ຂ່າວປະເສີດ ປີ1962ຢູ່ເມືອງໂບກລີນ, ນີວຢອກ, ທີນຊາເລັນ50ປີແຫ່ງການອັດສະຈັນ, ໜ້າ27

"ຂ້ອຍໄດ້ຮຽນຮູ້ເຖິງຄວາມສຳຄັນຂອງການເຮັດໃຫ້ສົມດູນກັນລະຫ່ວາງການ ອະທິຖານຮ້ອງຂໍແລະການອະທິຖານສັນລະເສີນສິ່ງທີ່ອັດສະຈັນແມ່ນການໃຊ້ເວລາໃນການຂອບພະຄຸນຫນຶ່ງຊົ່ວໂມງ. ມັນຈະນຳໝົດຊີວິດເຂົ້າສູ່ພາບໃຫມ່ແຫ່ງຄວາມຈິງ " ເດວິດວິວເກີຊັນໃນປຶ້ມເລື່ອງໄມ້ກາງແຂນແລະມີດພັບສະປິງ.ໜ້າ13

2. ________________________--ຮັກຜູ້ທີ່ຫຼົງເສຍ
ພວກເຮົາມີຄວາມທ້າທາຍແລະມີໂອກາດໃນການຕື່ມຄວາມຫວັງໃສ່ໃນຜູ້ທີ່ຕິດຢາເສບຕິດທຸກຄົນ

ເຢເລມີຢາ 29:11
2ເປໂຕ 3:9
ໂຢຮັນ 3:16 – 17

"ຕອນສວຍມື້ນັ້ນຂ້ອຍໄດ້ມີໂອກາດເທດສະໜາຄັ້ງທໍາອິດຕໍ່ແກ້ງນິວຢອກ, ຂ້ອຍກໍ່ບໍ່ໄດ້ພະຍາຍາມເອົາຖ້ອຍຄໍາທີ່ຍາກໃຫ້ພວກເຂົາແຕ່ໃຫ້ເຂົາຮູ້ວ່າພຣະເຈົ້າຮັກພວກເຂົາ - ເດວິດ ວິວເກີຊັນໃນປື້ມເລື່ອງໄມ້ກາງແຂນ ແລະມີດພັບສະປິງມ, ໜາ 29.

3. ______________ພຣະວິນຍານບໍລິສຸດສໍາລັບການປ່ຽນແປງຊີວິດ
ກິດຈະການ 1:8
ໂຢຮັນ 15:5

"ໃນທີ່ປະຊຸມຂ້ອຍໄດ້ອະທິຖານວ່າ,"ພຣະເຢຊູບໍ່ມີຫຍັງທີ່ຂ້ານ້ອຍເຮັດໄດ້, ຂ້ອຍໄດ້ເຊີນພວກຄົນໜຸ່ມມາທີ່ນີ້, ຕອນນີ້ຂ້ານ້ອຍກໍາລັງຈະກ້າວອອກໄປ, ເຊີນພຣະວິນຍານບໍລິສຸດມາ. ຖ້າພຣະອົງຕ້ອງການທີ່ຈະນໍາຫົວໃຈຂອງພວກຊາຍ,ຍິງເຫຼົ່ານີ້ ມັນຈະເກີດຂື້ນໂດຍຜ່ານການສໍາແດງຂອງພຣະອົງ. ຂໍໃຫ້ເປັນໄປໃນທາງຂອງພຣະອົງ, ຂໍໃຫ້ເປັນໄປໃນທາງຂອງພຣະອົງເທີ້ນ. ( ເປັນຄໍາອະທິຖານງຽບໆຂອງດາວິດວິວເກີຊັນອະທິຖານໃນທີ່ປະຊຸມ ກ່ອນທີ່ນິກກີ້ຄລູດແລະແກ້ງຕ່າງໆຈະມາຢູ່ຕໍ່ໜ້າເພື່ອຮັບ ພຣະເຢຊູເຂົ້າໃນຊີວິດຂອງພວກເຂົາ ໃນປີ1958. ) ປື້ມ ເລື່ອງ ໄມ້ກາງແຂນ ແລະ ມີພັບສະປິງ ໃນໜ້າ 79.

"ທັງໝົດພວກເຮົາສາມາດເວົ້າໄດ້ແມ່ນວ່າ, ບາງທີພວກເຮົາໄດ້ພົບອໍານາດທີ່ຈັບຕ້ອງຜູ້ຊາຍນັ້ນແຂງແຮງກວ່າສິ່ງເສບຕິດ. ແຕ່ອໍານາດນັ້ນແມ່ນພຣະວິນຍານບໍລິສຸດຢູ່ໃນລາວທີ່ບໍ່ຄືກັບສິ່ງເສບຕິດ,ເຮັດສິ່ງທີ່ແປກອອກໄປ: ພຣະອົງສໍາພັດຈັບຕ້ອງພຽງເພື່ອໃຫ້ມີອິດສະລະ. ດາວິດ ວິວເກີຊັນ, ປື້ມໄມ້ກາງແຂນ ແລະ ມີດພັບສະປິງ ໜ້າ 166.

ພຣະວິນຍານບໍລິສຸດເປັນຜູ້ຄວບຄຸມ, ຕາບໃດທີ່ພຣະວິນຍານບໍລິສຸດຍັງຄວບຄຸມຢູ່ ,ໂຄງການຈະມີຄວາມຈະເລີນເຕີບໂຕ,ເມື່ອໃດທີ່ເຮົາພະຍາຍາມເຮັດດ້ວຍອຳນາດຂອງເຮົາເອງ ເຮົາຈະລົ້ມເຫຼວ. ນີ້ແມ່ນການນຳທີ່ສຳຄັນໃນສູນຢູ່ ນິວຢອກ, ມັນເປັນສິ່ງສຳຄັນໂດຍກົງກັບສູນໃໝ່ຂອງເຮົາຢູ່ ຊິກາໂກ, ແລະອີກບ່ອນໜຶ່ງທີ່ກຳລັງເລີ່ມເຮັດຢູ່ ພີລາເດວເຟຍ,ໃນ

"ບອສຕັນ, ລອສແອງເຈີລີສ,ແລະໃນໂຕລອນໂຕ. ພຣະວິນຍານບໍລິສຸດໄດ້ຄວບຄຸມຢູ່ທີ່ນີ້. ພວກເຮົຄວນຂຽນໄວ້ ເພື່ອໃຫ້ທຸກຄົນເຫັນໃນທາງເຂົາປະຕູຂອງທຸກໆຕຶກທີ່ພວກເຮົາສ້າງຂຶ້ນດແຕ່ມັນອາດຈະມີຫຼາຍໆຄຳສັບ,ພວກເຮົາຈະເຮັດດີຂຶ້ນ,ພວກເຮົາຈະຂຽນມັນເທິງຊີວິດຂອງເຮົາແລະໃນໝົດທຸກຊີວິດທີ່ພວກເຮົາສາມາດນຳອອກມາ ສຳພັດແລະດົນໃຈໃນການຢູ່ຂອງພຣະວິນຍານບໍລິສຸດ." ດາວິດ ວິວເກີຊັນ, <u>ໄມ້ກາງແຂນແລະມີດພັບສະປິງ</u>. ໜ້າ 172.

4. _______________ແມ່ນໂຄງການ---ໂຄງຮ່າງແມ່ນສ້າງສາວົກ

ໂຢຮັນ 14:6
ໂຢຮັນ 8:36
2ໂກລິນໂທ 5:17

"ມັນເປັນເລື່ອງປົກກະຕິ ໃນມື້ເລີ່ມແລກຂອງສູນ ( ຢູ່ໂບກລີນ), ມີຜູ້ຮັບໃຊ້39ຄົນທີ່ອອກເມືອແຕ່ລະແລງ, ແລະມີ 1ຄົນອາໄສຢູ່ ເພື່ອເບິ່ງແຍງ 10ຄົນທີ່ກຳລັງເລີກຈາກການຕິດຢາ , ແຕ່ເມື່ອພວກເຮົາໄດ້ກັບບ້ານ,' ດອນ (ວິວເກີຊັນ) ເວົ້າວ່າ ໄດ້ເຫັນແຕ່ 9ຄົນທີ່ຍັງຢູ່, ຄືນຕໍ່ມາຍັງ 8 ແລະຕໍ່ມາຍັງ 7.ພວກເຮົາໄດ້ເຂົ້າໃຈວ່າ ມັນບໍ່ພຽງພໍທີ່ຈະໃຫ້ເຂົາຊຸເຂົ່າລົງຍອມຮັບພຣະເຢຊູຄຣິດດຖ້າເຮົາບໍ່ເບິ່ງແຍງເຂົາແລະເອົາການປ່ຽນແປງທີ່ແທ້ຈິງໃຫ້ເຂົາ--ສະຫຼຸບແລ້ວ ພວກເຮົາເຫັນວ່າ ການປະກາດຂ່າວປະເສີດ ທີ່ປາສະຈາກການສ້າງສາວົກບໍ່ແມ່ນຂ່າວປະເສີດທີ່ແທ້ຈິງ.'" ດອນ ວິວເກີຊັນ, ປຶ້ມ <u>The Jesus Factor</u>, ໜ້າ 25.

5. ______________ຄືພຣະເຢຊູ

ຜູ້ນໍາ ເປັນຜູ້ຮັບໃຊ້
ໂຢຮັນ 5:19
1 ໂກລິນໂທ 4:16 , 11:1
ຟີລິບປອຍ 3:17

"ມັນໄດ້ປາກົດຂຶ້ນໃນຄວາມຄິດ. ເຮືອນທີ່ຂ້ອຍຝັນເຫັນ-- ເຮົາຈະເອີ້ນມັນວ່າ ສູນທີນຊາເລັນ--ຈະຖືກຕັ້ງຂຶ້ນຫົວໃຈຂອງສ່ວນຍາກທີ່ສຸດບ່ອນງາມຢູ່ໃນເມືອງ.ມັນຈະເປັນສໍານັກງານໃຫ່ຍ ສໍາລັບ ກໍາມະກອນເຕັມເວລາ 12ຄົນ ຫຼືຫຼາຍກ່ວານັ້ນຜູ້ທີ່ແບ່ງປັນຄວາມຫວັງຂອງຂ້ອຍສໍາລັບຄົນໜຸ່ມຮອບຕົວຂອງເຮົາ…ກໍາມະກອນແຕ່ລະຄົນຄວນເປັນຜູ້ທີ່ມີຄວາມສໍານິສໍານານ…ໃນທີ່ນີ້ພວກເຮົາສາມາດນໍາຜູ້ຊາຍ ຜູ້ຍິງ ຜູ້ທີ່ຕ້ອງການການຊ່ວຍເຫຼືອພິເສດ.ພວກເຂົາຈະຢູ່ໃນບັນຍາກາດທີ່ ມີລະບຽບວິໄນແລະໃນຄວາມຮັກຄວາມເມດຕາ.. ພວກເຂົາຈະເຂົ້າຮ່ວມໃນການນະມັດສະການແລະການຮຽນຂອງພວກເຮົາ,ເຂົາຈະເບິ່ງຄຣິດຕຽນດໍາເນີນຊີວິດນໍາກັນ, ເຮັດວຽກນໍາກັນແລະເຂົາຈະເຂົ້າເຮັດວຽກດ້ວຍຕົວເຂົາເອງ,ມັນຈະເປັນສູນກາງການຝຶກຈູງ ທີ່ເຂົາຈະກະກຽມສໍາລັບຊີວິດຝ່າຍວິນຍານ (ດອນ ວິວເກີຊັນ) The Cross and Switchblade, ໜ້າ104. )

6. ຮູບແບບຂອງ ___________________________ສ່ວນຕົວ.

ເພັງສັນລະເສີນ 51:6
2 ໂກລິນໂທ 5:15
2 ໂກລິນໂທ 7:1

"ເມື່ອເຂົາເຂົ້າມາໃນສູນດອກກ່າວ, ພວກເຂົາຄືກັບເດັກນ້ອຍຜູ້ທີ່ຍຶດຕິດກັບການກະບົດຂອງເຂົາເປັນເວລາດົນນານ.ດັ່ງນັ້ນພວກເຂົາຕ້ອງຖືກຈັດກົດລະບຽບຄືກັບເດັກນ້ອຍຈົນກວ່າຄວາມຮູ້ຜິດຖືກຂອງເຂົາຟື້ນຄືນອີກ ແລະເຂົາຈະເລີ່ມຕ້ອງການສ້າງຄວາມຕັ້ງໃຈທີ່ຈະເຮັດຕາມຄວາມຕັ້ງໃຈຂອງພຣະເຈົ້າ. ເມື່ອສິ່ງນັ້ນເກີດຂຶ້ນ, ພວກເຂົາພ້ອມທີ່ຈະເຂົ້າມາໃນສູນບ່ອນທີ່ເຂົາຈະໄດ້ຮັບການຝຶກອົບຮົມໃນວິທີທາງການຕອບສະໜອງຕໍ່ພຣະຄຣິດໃນໝົດທຸກດ້ານຂອງສະຖານະການຊີວິດ.ມີເສລີພາບເພີ່ມຂຶ້ນແລະມີຄວາມຮັບຜິດຊອບທີ່ເຂົາສະແດງວ່າເຂົາພ້ອມແລ້ວ, ໄດ້ມີຄວາມຄາດຫມາຍຫຼາຍຂຶ້ນ ເມື່ອຢູ່ກັບພຣະເຈົ້າດ້ວຍຕົວເຂົາເອງໄດ້. – (ດອນ ວິວເກີຊັນ, The Jesus Factor, ໜ້າ 23-24 )

**7.** _______________

ທັງໝົດທີ່ກ່ຽວຂ້ອງກັບDNA , ຄວາມເຊື່ອແມ່ນສ່ວນໜຶ່ງໃນນັ້ນ--ລິດອຳນາດຈາກພຣະເຈົ້າທີ່ນຳພາຫຼອດການກະທຳ!

ໂຢຮັນ 11:40
1ກະສັດ 18: 16-45
ຢາໂກໂບ 2:14-17
ເຮັບເລີ 12: 1-2

"ໃນຕອນສວຍມື້ນັ້ນພວກເຮົາຕ້ອງໄດ້ຈ່າຍເງິນໃຫ້ເຈົ້າໜີ້, ໃນຈຳນວນເງິນ $15.000. ຂ້ອຍໄດ້ມີຄວາມວ່າງທີ່ການອັດສະຈັນຈະເກີດຂື້ນໃ ເວລານີ້ພວກເຮົາກຳລັງຢູ່ໃນສະຖານະການທີ່ຢ້ຳແຍ້ແລະກໍບໍ່ມີເງິນ. ໃນຕອນສວຍມື້ນັ້ນຂ້ອຍໄດ້ເຮັດສິ່ງທີ່ເລັ່ງດ່ວນ - ຂ້ອຍໄດ້ ຮ້ອງ ຄົນໜຸ່ມທຸກຄົນ, ຈະມາຊິກແກ້ງຕ່າງໆ, ຜູ້ຕິດຢາ, ເພື່ອນຮ່ວມງານຜູ້ຊາຍແລະຜູ້ຍິງ,ສະມະຊິກພະນັກງານທັງໝົດແລະບອກເພວກເຂົາວ່າສູນພວກເຮົາມີຄວາມປອດໄພ. ມີຄວາມຊົມຊື່ນຍິນດີຫລາຍໃນເວລັນັ້ນ. ຂ້ອຍວ່າເຮົາຄວນເຂາໄປໃນໂບດນ້ອຍແລະສັນລະເສີນຂອບຄຸນພຣະເຈົ້າແລະພວກເຮົາໄດ້ເຮັດສິ່ງນັ້ນ....ສຸດທ້າຍມີບາງຄົນໄດ້ຖາມວ່າ ເງິນໄດ້ມາຈາກໃສ? ຂ້ອຍໄດ້ຕອບວ່າ, " ໂອ້ ເງິນຍັງບໍ່ໄດ້ມາເທື່ອ. ພວກເຂົາກໍ່ຕົກໃຈ ຍືນຕົວແຂງ. ເງິນບໍ່ໄດ້ມາເທື່ອແຕ່ມັນຈະມາໃນວັນທີ10ເດືອນເກົ້າ. ຂ້ອຍຈະເອົາເຊັກເງິນ $15.000 ໃຫ້ພວກເຈົ້າເບິ່ງ. ຂ້ອຍຄິດວ່າເຮົາຄວນຂອບຄຸນພຣະເຈົ້າລ່ວງໜ້າ ແລະຂ້ອຍກໍ່ໄດ້ຍ່າງອອກໄປ." (ດອນ ວິວເກີຊັນ) <u>ໄມ້ກາງແຂນ ແລະ ມີດພັບສະປິງ,</u> ໜາ 168-169)

## C. ຂ້ອຍຈະເຮັດDNA ຂອງທີນຊາເລັນແນວໃດເປັນສ່ວນໜຶ່ງຂອງງານຮັບໃຊ້ຂອງຂ້ອຍ ?

1. ຜູ້ລິເລີ່ມ ທີນຊາເລັນ ໄດ້ເຮັດແນວໃດເພື່ອພັດທະນາ DNA ຂອງງານຮັບໃຊ້ນີ້?

   a. ລັກຊະນະDNAໃນທາງພຣະເຈົ້າໄດ້ເປັນສ່ວນໜຶ່ງໃນຊີວິດຂອງເຂົາແລະງານຮັບໃຊ້______________ທີ່ພວກເຂົາເຂົ້າມາເຮັດວຽກໃນອົງການທີນຊາເລັນ.

b. ພວກເຂົາໄດ້_______________DNA ນີ້ເພື່ອງານຮັບໃຊ້ຂອງເຂົາໃນ ອົງການທີນຊາເລັນ ທີ່ນໍາໄປສູ່ ພະພອນຂອງພຣະເຈົ້າໃນງານຮັບໃຊ້.

c. ພວກເຂົາໄດ້ສືບຕໍ່ທີ່ຈະ_______________ຕໍ່ໄປເມື່ອເຂົາໄດ້ເຮັດວຽກໃນທີນຊາເລັນ.

2. ເຈົ້າຈະສາມາດປະເມີນຈຸດດີຈຸດອ່ອນໄດ້ແນວໃດໃນການນໍາໃຊ້ 7 ລັກສະນະຂອງ DNAຂອງທີນຊາເລັນ.?

3. ມີບາງເລື່ອງເຄືອງໃຈອັນໃດແດ່ທີ່ສະແດງໃຫ້ເຫັນການປະກົດຂອງ DNA ທີນຊາເລັນໃນມື້ນີ້?

4. ເຈົ້າຈະເລີ່ມຕົ້ນແນວໃດໃນການເລີ່ມເຮັດແລະພັດທະນາລັກສະນະຂອງ DNA ເຫຼົ່ານີ້ເຂົ້າໃນງານຮັບໃຊ້ແຕ່ລະມື້ຂອງເຈົ້າ?

ສຸພາສິດ 3:5-6

# ຄໍາຖາມເພື່ອສົນທະນາກັນ.

1. ແບ່ງປັນຕົວຢ່າງ, ຄໍາພະຍານຫຼືປະສົບການຂອງລັກສະນະ DNA ນີ້

2. ແບ່ງປັນພຣະຄໍາພີອ້າງອີງສໍາລັບລັກສະນະ DNA ນີ້ ທີ່ເຊື່ອມຕໍ່ເປັນຢ່າງດີກັບ ທີນຊາເລັນ.

3. ທ່ານຈະເຫັນໄດ້ແນວໃດໃນລັກສະນະຂອງ DNA ນີ້ທີ່ຍັງຄົງຈະແຈ້ງໃນ ທີນຊາເລັນ 50 ກວ່າປີຫລັງຈາກໄດ້ເລີ້ມຕົ້ນ?

4. ການປ່ຽນແປງຂອງລັກສະນະຂອງ DNA ໄດ້ແດງອອກແນວໃດ?

5. ມີການສະແດງອອກຂອງລັກສະນະ DNA ນີ້ໄດ້ເສຍໄປບໍ່?

6. ແມ່ນຫຍັງຈະເສຍຖ້າວ່າລັກສະນະ DNA ຖືກລະເລີຍ?

7. ເຮົາຈະເຮັດແນວໃດເພື່ອຮັກສາລັກສະນະ DNA ໃຫ້ຢູ່ນໍາເຮົາໃນຖານະທີ່ເປັນຜູ້ນໍາແລະໃນງານ ຮັບໃຊ້ ໂຄງການ ທີນຊາເລັນ?

8. ເຮົາຈະໝັ້ນໃຈໄດ້ແນວໃດວ່າ DNA ໄດ້ຖ່າຍທອດໃຫ້ພະນັກງານໃໝ່ທຸກຄົນໃນອົງການ ທີນຊາເລັນ?

9. ທ່ານຈະເຫັນຕົວເອງແນວໃດວ່າທ່ານມີລັກສະນະ DNAນີ້?

10. ເຈົ້າເຮັດໃນພາກສ່ວນໃດໃນການຜ່ານສິ່ງເຫຼົ່ານີ້ໃຫ້ຜູ້ນໍາໃໝ່?